**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ........../ລບ

ນະຄອນຫຼວງວຽງຈັນ, ວັນທີ.......................

# (ຮ່າງ)
# ດຳລັດ
# ວ່າດ້ວຍການຫັນເປັນດິຈິຕອນ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍ ທຸລະກຳທາງເອເລັກໂຕຣນິກ (ສະບັບປັບປຸງ) ສະບັບເລກທີ 31/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ໜັງສືສະເໜີ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ....../ກຕສ, ລົງວັນທີ.....

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານການຫັນເປັນດິຈິຕອນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ແລະ ພະລັງງານສີຂຽວ ເຂົ້າໃນວຽກງານການຈັດຕັ້ງຂອງພາກລັດ, ເອກະຊົນ ແລະ ສັງຄົມ ໃຫ້ມີຄວາມທັນສະໄໝ, ຖືກຕ້ອງ, ສະດວກ, ວ່ອງໄວ ແລະ ໂປ່ງໃສ ຮັບປະກັນຄວາມປອດໄພ, ຄວາມໝັ້ນຄົງ, ຄວາມຍືນຍົງ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳໃນສັງຄົມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ການຫັນເປັນດິຈິຕອນ

ການຫັນເປັນດິຈິຕອນ ແມ່ນ ການຫັນປ່ຽນ ການເຄື່ອນໄຫວ, ການບໍລິຫານ, ການຜະລິດ, ການຄ້າ, ການບໍລິການ ແລະ ການລົງທຶນ ຈາກຮູບແບບດັ້ງເດີມ ໄປສູ່ຮູບແບບທັນສະໄໝ ດ້ວຍການນຳໃຊ້ເຕັກໂນໂລຊີດິຈິຕອນ ເພື່ອສ້າງມູນຄ່າເພີ່ມ, ສະດວກ, ວ່ອງໄວ, ໂປ່ງໃສ, ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຕັກໂນໂລຊີດິຈິຕອນ** ໝາຍເຖິງ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ໄດ້ພັດທະນາໃຫ້ເປັນລະບົບທັນສະໄໝ ເພື່ອຮອງຮັບການຫັນເປັນດິຈິຕອນ ເປັນຕົ້ນ ລະບົບຄລາວ, ລະບົບພລາດຟອມ, ປັນຍາປະດິດ, ຖານຂໍ້ມູນມະຫາສານ, ກຸ່ມຂໍ້ມູນຜູກພັນ;

2. **ລະບົບດິຈິຕອນ** ໝາຍເຖິງ ວິວັດທະນາການຂອງລະບົບຂໍ້ມູນຂ່າວສານ ທີ່ເຮັດໜ້າທີ່ເປັນລະບົບສູນກາງໃນການເກັບຮັກສາ, ປະມວນຜົນ ແລະ ການສື່ສານຂໍ້ມູນໃນຮູບແບບດິຈິຕອນ ລວມມີ ອົງປະກອບເຕັກໂນໂລຊີດິຈິຕອນ, ຂໍ້ມູນດິຈິຕອນ, ຖານລະບົບດິຈິຕອນ, ຊອບແວ, ຮາດແວ ແລະ ອຸປະກອນທີ່ເຊື່ອມຕໍ່;

3. **ຂະບວນການດິຈິຕອນ** ໝາຍເຖິງ ຕ່ອງໂສ້ການດຳເນີນງານທີ່ຖືກປະຕິບັດ, ປະມວນຜົນ ແລະ ຄວບຄຸມດ້ວຍຄອມພິວເຕີ ຫຼື ອຸປະກອນເອເລັກໂຕຣນິກອື່ນທີ່ຄ້າຍຄືກັນ ໃນສະພາບແວດລ້ອມດິຈິຕອນ;

4. **ຊັບສິນດິຈິຕອນ** ໝາຍເຖິງ ຂໍ້ມູນເອເລັກໂຕຣນິກທີ່ມີມູນຄ່າ ຫຼື ເປັນຕົວແທນໃຫ້ແກ່ມູນຄ່າຂອງຊັບສິນໃດໜຶ່ງ, ນຳໃຊ້ເພື່ອຈຸດປະສົງທາງການລົງທຶນ ແລະ ການຄ້າເປັນຕົ້ນ ເງິນຄຣິບໂຕ (Cryptocurrency), ໂທເຄັນດິຈິຕອນ (Digital Tokens), ໂທເຄັນດິຈິຕອນທີ່ບໍ່ສາມາດທົດແທນໄດ້(NFT), ຜະລິດຕະພັນດິຈິຕອນ (ຮູບພາບ, ສຽງ, ພາບເຄື່ອນໄຫວ, ຊອບແວ) ແລະ ຂໍ້ມູນດິຈິຕອນອື່ນໆ ທີ່ມີມູນຄ່າ;

5. **ການຫັນຊັບສິນເປັນຊັບສິນດິຈິຕອນ** ໝາຍເຖິງ ການນຳໃຊ້ເຕັກໂນໂລຊີດິຈິຕອນ ເພື່ອສ້າງ ຫຼື ປ່ຽນຮູບແບບຊັບສິນມາເປັນຂໍ້ມູນເອເລັກໂຕຣນິກ ທີ່ມີມູນຄ່າ, ສາມາດຖືຄອງ, ນຳໃຊ້ເປັນຕົວກາງໃນການແລກປ່ຽນ, ຊື້ ຂາຍ ຫຼື ລົງທຶນ;

6. **ເຂດເຕັກໂນໂລຊີດິຈິຕອນ** ໝາຍເຖິງ ສະຖານທີ່ທີ່ໄດ້ຮັບການກຳນົດສະເພາະ ເພື່ອດຶງດູດການລົງທຶນ, ສະໜອງໂຄງລ່າງພື້ນຖານ ແລະ ລະບົບນິເວດທີ່ຈຳເປັນໃຫ້ແກ່ການຂະຫຍາຍຕົວຂອງເສດຖະກິດດິຈິຕອນ, ເປັນສະຖານທີ່ຈຸດສຸມສົ່ງເສີມ ການຄົ້ນຄວ້າ, ການພັດທະນາ, ການຜະລິດ, ການນຳໃຊ້ ແລະ ການບໍລິການ ຜະລິດຕະພັນເຕັກໂນໂລຊີດິຈິຕອນ, ບົ່ມເພາະວິສາຫະກິດ ແລະ ສ້າງບຸກຄະລາກອນ ດ້ານເຕັກໂນໂລຊີດິຈິຕອນ;

7. **ເຕັກໂນໂລຊີໃໝ່ (Emerging Technologies)** ໝາຍເຖິງ ເຕັກໂນໂລຊີທີ່ພວມພັດທະນາ, ມີການປ່ຽນແປງຢ່າງວ່ອງໄວ, ມີທ່າແຮງສູງໃນການສ້າງຜົນກະທົບຕໍ່ການຂັບເຄື່ອນເສດຖະກິດ-ສັງຄົມ ເປັນຕົ້ນ ປັນຍາປະດິດ (AI), ຖານຂໍ້ມູນມະຫາສານ (Big Data), ເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ (Blockchain), ອິນເຕີເນັດແຫ່ງສັບພະສິ່ງ (IoT), ເຕັກໂນໂລຊີຄອມພິວເຕີຂັ້ນສູງ (Quantum Computing) ແລະ ເຕັກໂນໂລຊີອື່ນ ທີ່ອາດຈະເກີດຂຶ້ນໃນອະນາຄົດ;

8. **ປັນຍາປະດິດ (AI-Artificial Intelligence)** ໝາຍເຖິງ ເຕັກໂນໂລຊີທີ່ຊ່ວຍໃຫ້ລະບົບຄອມພິວເຕີ ຫຼື ເຄື່ອງຈັກ ສາມາດຈຳລອງຈະບວນການປັນຍາຂອງມະນຸດ ເປັນຕົ້ນ ການຮຽນຮູ້, ການຄົ້ນຄິດ, ການແກ້ໄຂບັນຫາ, ການຕັດສິນໃຈ ແລະ ການພັດທະນາຕົນເອງ;

9. **ຖານຂໍ້ມູນມະຫາສານ (Big Data)** ໝາຍເຖິງ ລະບົບເຕັກໂນໂລຊີໃນການລວບລວມ, ການເກັບຮັກສາຂໍ້ມູນ, ການບໍລິຫານ-ຈັດການ, ການວິເຄາະ ແລະ ການປະມວນຜົນ ຂໍ້ມູນຂະໜາດໃຫຍ່ ແລະ ມີຄວາມຫຼາກຫຼາຍ;

10. **ເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ (Blockchain)** ໝາຍເຖິງ ລະບົບການເກັບຮັກສາຂໍ້ມູນແບບບໍ່ລວມສູນ ແຕ່ຂໍ້ມູນທີ່ໄດ້ຮັບການປົກປ້ອງນັ້ນ ຈະຖືກເກັບຮັກສາເປັນສຳເນົາໄວ້ໃນລະບົບເຄືອຂ່າຍເອເລັກໂຕຣນິກຂອງຜູ້ໃຊ້ງານທັງໝົດ ທີ່ໃຊ້ຖານຂໍ້ມູນເປັນແຕ່ລະກຸ່ມພົວພັນຫາກັນແບບຕ່ອງໂສ້ ຊຶ່ງມີຄວາມປອດໄພສູງ ແລະ ຍາກຕໍ່ການປອມແປງ ຫຼື ໂຈລະກຳຂໍ້ມູນ;

11. **ສະພາບແວດລ້ອມດິຈິຕອນ** ໝາຍເຖິງ ພື້ນທີ່ການເຄື່ອນໄຫວ, ໂຕ້ຕອບ, ທຸລະກຳ ແລະ ສະໜອງບໍລິການ ທີ່ຖືກສ້າງຂຶ້ນ ແລະ ດຳເນີນການຜ່ານໂຄງລ່າງພື້ນຖານດິຈິຕອນ, ລະບົບດິຈິຕອນ, ຖານລະບົບດິຈິຕອນ ແລະ ຂໍ້ມູນດິຈິຕອນ;

12. **ພົນລະເມືອງດິຈິຕອນ** ໝາຍເຖິງ ບຸກຄົນທີ່ນຳໃຊ້ເຕັກໂນໂລຊີດິຈິຕອນ ແລະ ອິນເຕີເນັດ ຢ່າງມີຄວາມຮັບຜິດຊອບ, ມີມາລະຍາດ ແລະ ປອດໄພ ພາຍໃຕ້ລະບຽບກົດໝາຍ;

13. **ວັດທະນະທຳດິຈິຕອນ** ໝາຍເຖິງ ຄ່ານິຍົມ, ພຶດຕິກຳ, ກິດຈະກຳສ້າງສັນ ແລະ ການແບ່ງປັນເນື້ອຫາທາງວັດທະນະທຳ ໃນສະພາບແວດລ້ອມດິຈິຕອນ ທີ່ສອດຄ່ອງກັບກົດໝາຍ ແລະ ປະເພນີທາງວັດທະນະທຳຂອງຊາດ;

**14. ຊັບພະຍາກອນມະນຸດດິຈິຕອນ** ໝາຍເຖິງ ກຳລັງແຮງງານໃນທຸກຂະແໜງການ ທີ່ມີຄວາມຮູ້, ຄວາມສາມາດ ແລະ ທັກສະດ້ານດິຈິຕອນ ໃນການນຳໃຊ້ເຕັກໂນໂລຊີດິຈິຕອນ ເພື່ອຂັບເຄື່ອນຂະບວນການຫັນເປັນດິຈິຕອນ ຢ່າງມີປະສິດທິຜົນ, ໂປ່ງໃສ ແລະ ປອດໄພ;

**15. ທັກສະດ້ານດິຈິຕອນ** ໝາຍເຖິງ ການມີທັກສະພື້ນຖານ ແລະ ຄວາມຮູ້ຄວາມສາມາດ ໃນການນຳໃຊ້ຄອມພິວເຕີ ແລະ ອຸປະກອນດິຈິຕອນ ໃນການເຊື່ອມຕໍ່ອິນເຕີເນັດ ເພື່ອຮັບໃຊ້ການດຳລົງຊີວິດ ແລະ ວຽກງານ ຕະຫຼອດເຖິງການມີທັກສະຂັ້ນສູງທີ່ມີຄວາມສາມາດໃນການພັດທະນາຊອບແວຕ່າງໆ ແລະ ສາມາດເຂົ້າໃຈເລິກເຊິ່ງ ປະຍຸກ ໝູນໃຊ້ ເຕັກໂນໂລຊີໃຫ້ເກີດປະໂຫຍດສູງສຸດ ໂດຍບໍ່ສ້າງຜົນກະທົບດ້ານລົບຕໍ່ຜູ້ອື່ນ;

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຫັນເປັນດິຈິຕອນ**

ລັດ ໃຫ້ຄວາມສຳຄັນແກ່ການພັດທະນາ ແລະ ນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນວຽກງານການເຄື່ອນໄຫວ, ການບໍລິຫານ, ການຜະລິດ, ການຄ້າ, ການບໍລິການ ແລະ ການລົງທຶນ ໃຫ້ມີຄວາມປອດໄພ, ວ່ອງໄວ, ໂປ່ງໃສ ເພື່ອຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ.

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ການຫັນເປັນດິຈິຕອນ ດ້ວຍການກຳນົດນະໂຍບາຍ, ລະບຽບການ, ພັດທະນາຊັບພະຍາກອນມະນຸດ, ເຮັດທົດລອງເຕັກໂນໂລຊີໃໝ່, ສະໜອງງົບປະມານ ແລະ ວັດຖຸປະກອນທີ່ຈຳເປັນ ເຂົ້າໃນວຽກງານການຫັນເປັນດິຈິຕອນ ໃຫ້ສອດຄ່ອງໃນແຕ່ລະໄລຍະ.

ລັດ ຊຸກຍູ້, ສົ່ງເສີມ ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການກໍ່ສ້າງ, ການພັດທະນາ ແລະ ການຂະຫຍາຍ ລະບົບໂຄງລ່າງພື້ນຖານດິຈິຕອນ, ເຂດພັດທະນາເຕັກໂນໂລຊີດິຈິຕອນ.

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີສ່ວນຮ່ວມໃນການຫັນເປັນດິຈິຕອນ ແລະ ນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ໃຫ້ເປັນຮູບປະທຳ ໂດຍສະເພາະ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດ ນ້ອຍ ແລະ ກາງ.

ລັດ ເອົາໃຈໃສ່ ໂຄສະນາເຜີຍແຜ່ ແລະ ສ້າງຈິດສຳນຶກ ໃຫ້ສັງຄົມ ຮັບຮູ້, ເຂົ້າໃຈ ແລະ ຫັນປ່ຽນຈິນຕະນາການ ໃຫ້ມີຄວາມເຊື່ອໝັ້ນຕໍ່ການຫັນເປັນດິຈິຕອນ, ໝູນໃຊ້ທ່າແຮງທີ່ບົ່ມຊ້ອນ ເພື່ອຫັນເປັນລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຫັນເປັນດິຈິຕອນ**

ໃນການເຄື່ອນໄຫວວຽກງານຫັນເປັນດິຈິຕອນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຮັບປະກັນຄວາມສະຫງົບ ແລະ ຄວາມໝັ້ນຄົງຂອງຊາດ;
3. ຮັບປະກັນ ການຫັນເປັນດິຈິຕອນ ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ;
4. ຮັບປະກັນ ການເຊື່ອມໂຍງຂໍ້ມູນ, ການເຂົ້າເຖິງ ແລະ ການນຳໃຊ້ ເຕັກໂນໂລຊີດິຈິຕອນ ທີ່ມີຄຸນະພາບ, ປອດໄພ, ສະດວກ, ໂປ່ງໃສ, ມີປະສິດທິຜົນ, ສີຂຽວ ແລະ ຍືນຍົງ.

**ມາດຕາ 6 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບ ວຽກງານຫັນເປັນດິຈິຕອນ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຫັນເປັນດິຈິຕອນ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ປະສົບການ, ເຕັກນິກ, ເຕັກໂນໂລຊີ, ການສ້າງ ແລະ

ພັດທະນາໂຄງລ່າງພື້ນຖານ ແລະ ຊັບພະຍາກອນມະນຸດ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສົນທິສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ເສົາຄໍ້າຂອງການຫັນເປັນດິຈິຕອນ

**ມາດຕາ 8 ເສົາຄໍ້າຂອງການຫັນເປັນດິຈິຕອນ**

ເສົາຄໍ້າຂອງການຫັນເປັນດິຈິຕອນ ແມ່ນ ອົງປະກອບຫຼັກ ຫຼື ຂົງເຂດຈຸດສຸມອັນຈຳເປັນ, ເປັນພື້ນຖານສຳຄັນ ທີ່ກຳນົດໄວ້ ເພື່ອວາງຮາກຖານ ແລະ ທິດທາງ ໃນການຂັບເຄື່ອນການຫັນເປັນດິຈິຕອນ ຢ່າງເປັນລະບົບ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ການຫັນເປັນດິຈິຕອນປະກອບມີ ສາມ ເສົາຄໍ້າ ດັ່ງນີ້:

1. ລັດຖະບານດິຈິຕອນ;
2. ເສດຖະກິດດິຈິຕອນ;
3. ສັງຄົມດິຈິຕອນ.

### ໝວດທີ 1
### ລັດຖະບານດິຈິຕອນ

**ມາດຕາ 9 ລັດຖະບານດິຈິຕອນ**

ລັດຖະບານດິຈິຕອນ ແມ່ນ ລັດຖະບານທີ່ນຳໃຊ້ ເຕັກໂນໂລຊີດິຈິຕອນ ເຂົ້າໃນການບໍລິຫານ ແລະ ການບໍລິການໃນທຸກຂະແໜງການ ຂອງລັດ ເພື່ອເພີ່ມປະສິດທິພາບຂອງວຽກງານ, ມີຄວາມສະດວກ, ທັນສະໄໝ, ວ່ອງໄວ, ປະຢັດ ແລະ ຮັບປະກັນຄວາມປອດໄພ, ເຮັດໃຫ້ການບໍລິການລັດ ສູ່ປະຊາຊົນ ໄດ້ຢ່າງທົ່ວເຖິງ ແລະ ມີປະສິດທິຜົນ.

**ມາດຕາ 10 ການຫັນເປັນລັດຖະບານດິຈິຕອນ**

ການຫັນເປັນລັດຖະບານດິຈິຕອນ ແມ່ນ ການຫັນປ່ຽນການບໍລິຫານ ແລະ ການບໍລິການ ໃນທຸກຂະ ແໜງການ ຂອງລັດ ຈາກຮູບແບບດັ້ງເດີມ ໄປສູ່ລັດຖະບານດິຈິຕອນ.

ສຳລັບ ລາຍລະອຽດກ່ຽວກັບການຫັນເປັນລັດຖະບານດິຈິຕອນ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

### ໝວດທີ 2
### ເສດຖະກິດດິຈິຕອນ

**ມາດຕາ 11 ເສດຖະກິດດິຈິຕອນ**

ເສດຖະກິດດິຈິຕອນ ແມ່ນ ເສດຖະກິດທີ່ນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການເຄື່ອນໄຫວໃນທຸກພາກສ່ວນເສດຖະກິດ ເພື່ອເພີ່ມປະສິດທິພາບ, ປະສິດທິຜົນ ແລະ ສ້າງມູນຄ່າເພີ່ມ ໃຫ້ແກ່ການຜະລິດ, ການ ຄ້າ , ການບໍລິການ ແລະ ການລົງທຶນ.

**ມາດຕາ 12 ການຫັນເປັນເສດຖະກິດດິຈິຕອນ**

ການຫັນເປັນເສດຖະກິດດິຈິຕອນ ແມ່ນ ການຫັນປ່ຽນການເຄື່ອນໄຫວເສດຖະກິດແບບດັ້ງເດີມ ໄປສູ່ເສດຖະກິດດິຈິຕອນ.

ການຫັນເປັນເສດຖະກິດດິຈິຕອນ ປະກອບດ້ວຍ:

1. ການຫັນການຜະລິດເປັນດິຈິຕອນ;
2. ການຫັນການຄ້າເປັນດິຈິຕອນ;
3. ການຫັນການບໍລິການເປັນດິຈິຕອນ;
4. ການຫັນການລົງທຶນເປັນດິຈິຕອນ.

**ມາດຕາ 13 ການຫັນການຜະລິດເປັນດິຈິຕອນ**

ການຫັນການຜະລິດເປັນດິຈິຕອນ ແມ່ນການນໍາໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນທຸກຂົງເຂດການຜະລິດ ເພື່ອຍົກລະດັບກໍາລັງການຜະລິດ, ຫຼຸດຜ່ອນຕົ້ນທຶນ, ຮັບປະກັນຄຸນນະພາບ, ມີຄວາມປອດໄພ ແລະ ສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະພັນ.

ທຸກພາກສ່ວນການຜະລິດ ທັງພາກລັດ ແລະ ເອກະຊົນ ສາມາດຫັນປ່ຽນຮູບແບບການຜະລິດແບບດັ້ງເດີມ ໄປສູ່ການຜະລິດແບບດິຈິຕອນ ໂດຍການນໍາໃຊ້ ເຕັກໂນໂລຊີດິຈິຕອນ ເຂົ້າໃນການ ຄຸ້ມຄອງ, ວາງແຜນ ແລະ ປະຕິບັດງານ ໃນຂະບວນການຜະລິດ.

ຂະແໜງການເຕັກໂນໂລຊີ ແລະ ການສື່ສານເປັນເຈົ້າການປະສານສົມທົບ ກັບພາກສ່ວນ ທີ່ກ່ຽວຂ້ອງໃນການກໍານົດນະໂຍບາຍ, ອໍານວຍຄວາມສະດວກ, ໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກ ກ່ຽວກັບ ການຫັນການຜະລິດເປັນດິຈິຕອນ.

**ມາດຕາ 14 ການຫັນການຄ້າເປັນດິຈິຕອນ**

ການຫັນການຄ້າເປັນດິຈິຕອນ ແມ່ນການນໍາໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການເຄື່ອນໄຫວກິດຈະການການຄ້າ ໃຫ້ ສະດວກ, ວ່ອງໄວ, ຫຼຸດຜ່ອນຕົ້ນທຶນ, ມີຂໍ້ມູນການຄ້າຊັດເຈນ, ສາມາດຂະຫຍາຍຕະຫຼາດ ແລະ ເຂົ້າເຖິງລູກຄ້າໄດ້ກ້ວາງຂວາງ.

ຜູ້ດໍາເນີນກິດຈະການການຄ້າ ພາກລັດ ແລະ ເອກະຊົນ ສາມາດຫັນປ່ຽນຮູບແບບການຄ້າດັ້ງເດີມ ໄປສູ່ການຄ້າແບບດິຈິຕອນ ໂດຍການນໍາໃຊ້ ເຕັກໂນໂລຊີດິຈິຕອນ ເຂົ້າໃນການ ຊື້ ຂາຍຜ່ານລະບົບອອນລາຍ, ຕະຫຼາດທາງເອເລັກໂຕຣນິກ, ຮ້ານຄ້າເອເລັກໂຕຣນິກ, ການຊໍາລະຜ່ານລະບົບອອນລາຍ, ການຕະຫຼາດທາງອອນລາຍ ແລະ ການເຊື່ອມໂຍງຂໍ້ມູນການຄ້າ ເພື່ອສ້າງມູນຄ່າເພີ່ມທາງເສດຖະກິດ.

ຂະແໜງການເຕັກໂນໂລຊີ ແລະ ການສື່ສານເປັນເຈົ້າການປະສານສົມທົບ ກັບພາກສ່ວນ ທີ່ກ່ຽວຂ້ອງໃນການກໍານົດນະໂຍບາຍ, ອໍານວຍຄວາມສະດວກ, ໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກ ກ່ຽວກັບ ການຫັນການຄ້າເປັນດິຈິຕອນ.

**ມາດຕາ 15 ການຫັນການບໍລິການເປັນດິຈິຕອນ**

ການຫັນການບໍລິການເປັນດິຈິຕອນ ແມ່ນການນໍາໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການເຄື່ອນໄຫວກິດຈະການການບໍລິການ ໃຫ້ ສະດວກ, ວ່ອງໄວ, ຫຼຸດຜ່ອນຕົ້ນທຶນ, ມີຂໍ້ມູນການບໍລິການຊັດເຈນ, ສ້າງຮູບແບບການບໍລິການໃໝ່, ຫຼຸດຜ່ອນຄ່າສິ້ນເປືອງ, ປະຢັດເວລາ, ຍົກລະດັບການບໍລິການໃຫ້ມີຄຸນນະພາບ ແລະ ເຂົ້າເຖິງຜູ້ໃຊ້ບໍລິການຢ່າງກ້ວາງຂວາງ.

ຜູ້ດໍາເນີນກິດຈະການການບໍລິການ ພາກລັດ ແລະ ເອກະຊົນ ສາມາດຫັນປ່ຽນການບໍລິການດັ້ງເດີມ ໄປສູ່ການບໍລິການແບບດິຈິຕອນ ໂດຍການນໍາໃຊ້ ເຕັກໂນໂລຊີດິຈິຕອນ ເຂົ້າໃນການບໍລິການ ເປັນຕົ້ນ ການບໍລິການໂອນເງິນອອນລາຍ, ການຊໍາລະຜ່ານລະບົບອອນລາຍ, ບໍລິການຂົນສົ່ງ, ບໍລິການຈອງຜ່ານລະບົບອອນລາຍ.

ຂະແໜງການເຕັກໂນໂລຊີ ແລະ ການສື່ສານເປັນເຈົ້າການປະສານສົມທົບ ກັບພາກສ່ວນ ທີ່ກ່ຽວຂ້ອງໃນການກໍານົດນະໂຍບາຍ, ອໍານວຍຄວາມສະດວກ, ໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກ ກ່ຽວກັບ ການຫັນການບໍລິການເປັນດິຈິຕອນ.

**ມາດຕາ 16 ການຫັນການລົງທຶນເປັນດິຈິຕອນ**

ການຫັນການລົງທຶນເປັນດິຈິຕອນ ແມ່ນການນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການເຄື່ອນໄຫວກິດຈະການການລົງທຶນ ລວມທັງການຫັນຊັບສິນເປັນຊັບສິນດິຈິຕອນ ໃຫ້ມີຄວາມໂປ່ງໃສ, ສະດວກ, ວ່ອງໄວ, ຫຼຸດຜ່ອນຕົ້ນທຶນ, ມີຂໍ້ມູນການລົງທຶນຊັດເຈນ, ຫຼຸດຜ່ອນຂັ້ນຕອນການອະນຸຍາດລົງທຶນ, ຫຼຸດຜ່ອນຄ່າສິ້ນເປືອງ, ປະຢັດເວລາ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍແກ່ການລົງທຶນ.

ຜູ້ດຳເນີນກິດຈະການການລົງທຶນ ພາກລັດ ແລະ ເອກະຊົນ ສາມາດຫັນປ່ຽນການລົງທຶນດັ້ງເດີມ ໄປສູ່ການລົງທຶນແບບດິຈິຕອນ ໂດຍການນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການລົງທຶນ ເປັນຕົ້ນ ຫຸ້ນ, ພັນທະບັດ, ອະສັງຫາລິມະຊັບ, ຜະລິດຕະພັນດິຈິຕອນ, ຊັບສິນດິຈິຕອນ.

ກະຊວງເຕັກໂນໂລຊີ ແລະ ການສື່ສານເປັນເຈົ້າການປະສານສົມທົບ ກັບພາກສ່ວນ ທີ່ກ່ຽວຂ້ອງໃນການກຳນົດນະໂຍບາຍ, ອຳນວຍຄວາມສະດວກ, ໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກ ກ່ຽວກັບ ການຫັນການລົງທຶນເປັນດິຈິຕອນ.

ສຳລັບການຫັນຊັບສິນເປັນຊັບສິນດິຈິຕອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 17 ຄວາມຮັບຜິດຊອບຂອງລັດ ກ່ຽວກັບການຫັນເປັນເສດຖະກິດດິຈິຕອນ**

ລັດມີຄວາມຮັບຜິດຊອບ ກ່ຽວກັບການຫັນເປັນເສດຖະກິດດິຈິຕອນ ດັ່ງນີ້:

1. ຖືເອົາວິສາຫະກິດເປັນໃຈກາງ, ຊຸກຍູ້ໃຫ້ມີການສ້າງ, ພັດທະນາ ແລະ ນຳໃຊ້ເຕັກໂນໂລຊີດິຈິຕອນເຂົ້າໃນການຜະລິດ, ການຄ້າ, ການບໍລິການ ແລະ ການລົງທຶນ;
2. ໃຫ້ບູລິມະສິດທຸກພາກສ່ວນເສດຖະກິດ ໃນການພັດທະນາລະບົບດິຈິຕອນ, ຖານລະບົບດິຈິຕອນ, ລະບົບນິເວດດິຈິຕອນ ທີ່ຕອບສະໜອງຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ;
3. ຮັບປະກັນຄວາມປອດໄພທາງໄຊເບີ ແລະ ການປົກປ້ອງຂໍ້ມູນ;
4. ສ້າງສະພາບແວດລ້ອມການແຂ່ງຂັນທີ່ເປັນທຳ, ຊຸກຍູ້, ຄຸ້ມຄອງ ແລະ ບໍລິຫານຄວາມສ່ຽງ ໃນການເຄື່ອນໄຫວເສດຖະກິດດິຈິຕອນ.
5. ມີຄວາມຮັບຜິດຊອບອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 18 ຄວາມຮັບຜິດຊອບຂອງພາກສ່ວນເສດຖະກິດ**

ພາກສ່ວນເສດຖະກິດ ມີຄວາມຮັບຜິດຊອບໃນການຫັນເປັນເສດຖະກິດດິຈິຕອນ ດັ່ງນີ້:

1. ດຳເນີນການປະເມີນຂີດຄວາມສາມາດ ແລະ ລະດັບຄວາມພ້ອມດ້ານດິຈິຕອນຂອງຕົນ ໂດຍນຳໃຊ້ເຄື່ອງມື ຫຼື ມາດຕະຖານທີ່ກະຊວງການກ່ຽວຂ້ອງກຳນົດອອກ;
2. ກຳນົດ ເປົ້າໝາຍ, ວິໄສທັດ ແລະ ການຫັນເປັນດິຈິຕອນເຂົ້າໃນແຜນດຳເນີນທຸລະກິດໃຫ້ຊັດເຈນໂດຍສອດຄ່ອງກັບສະພາບຈຸດພິເສດ ຂອງທຸລະກິດຕົນ ເພື່ອແກ້ໄຂບັນຫາ, ຫຼຸດຜ່ອນຕົ້ນທຶນ ຫຼື ສ້າງໂອກາດທາງທຸລະກິດໃໝ່;
3. ເລືອກເຟັ້ນ, ນຳໃຊ້ເຕັກໂນໂລຊີທີ່ໄດ້ມາດຕະຖານ, ມີຄວາມປອດໄພ ແລະ ເໝາະສົມ ເຂົ້າໃນການດຳເນີນທຸລະກິດ;
4. ສ້າງກົນໄກຕິດຕາມຄວາມຄືບໜ້າ ແລະ ປະເມີນຜົນໄດ້ຮັບ ຂອງການນຳໃຊ້ເຕັກໂນໂລຊີ ເຂົ້າໃນການຫັນເປັນເສດຖະກິດດິຈິຕອນ ຢ່າງເປັນປົກກະຕິ.

## ໝວດທີ 3
## ສັງຄົມດິຈິຕອນ

**ມາດຕາ 19 ສັງຄົມດິຈິຕອນ**

ສັງຄົມດິຈິຕອນ ແມ່ນ ສັງຄົມທີ່ນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການເຄື່ອນໄຫວຂອງສັງຄົມ ເພື່ອເພີ່ມ ຄວາມສະດວກ, ວ່ອງໄວ, ປະຢັດ ແລະ ຍົກສູງຄຸນນະພາບ ໃຫ້ແກ່ການພັດທະນາ ພົນລະເມືອງ, ການສຶກສາ, ສາທາລະນະສຸກ ແລະ ວັດທະນະທຳ.

**ມາດຕາ 20 ການຫັນເປັນສັງຄົມດິຈິຕອນ**

ການຫັນເປັນສັງຄົມດິຈິຕອນ ແມ່ນ ການຫັນປ່ຽນການເຄື່ອນໄຫວ ສັງຄົມແບບດັ້ງເດີມ ໄປສູ່ສັງຄົມດິຈິຕອນ.

ການຫັນເປັນສັງຄົມດິຈິຕອນ ປະກອບດ້ວຍ:

1. ການຫັນເປັນພົນລະເມືອງດິຈິຕອນ;
2. ການຫັນການສຶກສາເປັນດິຈິຕອນ;
3. ການຫັນສາທາລະນະສຸກເປັນດິຈິຕອນ;
4. ການຫັນເປັນວັດທະນະທຳດິຈິຕອນ.

**ມາດຕາ 21 ການຫັນເປັນພົນລະເມືອງດິຈິຕອນ**

ການຫັນເປັນພົນລະເມືອງດິຈິຕອນ ແມ່ນ ການນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການເຂົ້າເຖິງຂໍ້ມູນຂ່າວສານ, ການສື່ສານ, ການຕິດຕໍ່ພົວພັນ ແລະ ການດຳລົງຊີວິດ ຂອງພົນລະເມືອງໃນສັງຄົມ ເພື່ອຍົກລະດັບຄຸນນະພາບຊີວິດການເປັນຢູ່ ແລະ ສ້າງຄວາມສະດວກໃນການພົວພັນສັງຄົມ.

ພົນລະເມືອງດິຈິຕອນ ມີຄວາມຮັບຜິດຊອບ ໃນການນຳໃຊ້ເຕັກໂນໂລຊີດິຈິຕອນ ໂດຍສະເພາະການນຳໃຊ້ສື່ສັງຄົມອອນລາຍ ຢ່າງມີຈັນຍາບັນ, ເຄົາລົບສິດ ແລະ ກຽດສັກສີຂອງຜູ້ອື່ນ, ບໍ່ສ້າງ ຫຼື ເຜີຍແຜ່ຂໍ້ມູນຂ່າວສານທີ່ເປັນໄພອັນຕະລາຍ, ສິ່ງລາມົກອານາຈານ, ຂ່າວປອມ, ການໝິ່ນປະໝາດ ແລະ ການຍຸຍົງທີ່ສ້າງຄວາມແຕກແຍກໃນສັງຄົມ.

**ມາດຕາ 22 ການຫັນການສຶກສາເປັນດິຈິຕອນ**

ການຫັນການສຶກສາເປັນດິຈິຕອນ ແມ່ນການນຳໃຊ້ເຕັກໂນໂລຊີດິຈິຕອນເຂົ້າໃນການຄຸ້ມຄອງບໍລິຫານການສຶກສາ, ການສ້າງ ແລະ ພັດທະນາ ຫຼັກສູດ, ສື່ ການຮຽນ ການສອນ, ການຈັດຕັ້ງ ການຮຽນ ການສອນ, ຫໍສະໝຸດດິຈິຕອນ, ຖານລະບົບການສຶກສາທາງໄກ, ການຄົ້ນຄວ້າວິທະຍາສາດການສຶກສາ ເພື່ອຍົກລະດັບຄຸນນະພາບ, ອຳນວຍຄວາມສະດວກ ແລະ ການເຂົ້າເຖິງການສຶກສາໄດ້ຢ່າງທົ່ວເຖິງ.

ສະຖານການສຶກສາ ຕ້ອງເອົາໃຈໃສ່ບຳລຸງ, ຍົກລະດັບ ຄວາມຮູ້ ແລະ ທັກສະດ້ານດິຈິຕອນ ໃຫ້ແກ່ ຄູ ແລະ ບຸກຄະລາກອນການສຶກສາ ເພື່ອໃຫ້ສາມາດນຳໃຊ້ເຕັກໂນໂລຊີດິຈິຕອນເຂົ້າໃນການຮຽນ-ການສອນ ແລະ ຖ່າຍທອດຄວາມຮູ້ໃຫ້ແກ່ນັກຮຽນ-ນັກສຶກສາ ໄດ້ຢ່າງມີປະສິດທິຜົນ.

**ມາດຕາ 23 ການຫັນສາທາລະນະສຸກເປັນດິຈິຕອນ**

ການຫັນສາທາລະນະສຸກເປັນດິຈິຕອນ ແມ່ນ ການນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການຄຸ້ມຄອງບໍລິຫານ ແລະ ຈັດຕັ້ງປະຕິບັດວຽກງານ ບໍລິການສາທາລະນະສຸກ, ການສະໜັບສະໜູນການບໍລິການສາທາລະນະສຸກ ແລະ ການພັດທະນາບຸກຄະລາກອນສາທາລະນະສຸກ ເພື່ອຍົກລະດັບຄຸນນະພາບ, ອຳນວຍຄວາມສະດວກ ແລະ ການເຂົ້າເຖິງການບໍລິການດ້ານສຸຂະພາບໄດ້ຢ່າງທົ່ວເຖິງ.

**ມາດຕາ 24 ການຫັນເປັນວັດທະນະທຳດິຈິຕອນ**

ການຫັນເປັນວັດທະນະທຳດິຈິຕອນ ແມ່ນ ການນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການໂຄສະນາເຜີຍແຜ່, ສົ່ງເສີມ ການອະນຸລັກ, ການປົກປັກຮັກສາ ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງ

ຊົນເຜົ່າ, ມໍລະດົກແຫ່ງຊາດທາງດ້ານ ວັດທະນະທໍາ, ປະຫວັດສາດ ແລະ ທໍາມະຊາດ ເພື່ອໃຫ້ກາຍເປັນກໍາລັງແຮງດຶງດູດທາງດ້ານວັດທະນະທໍາ, ການທ່ອງທ່ຽວ, ເພີ່ມມູນຄ່າຜະລິດຕະພັນທາງດ້ານວັດທະນາທໍາ ແລະ ສ້າງຊື່ສຽງໃນເວທີສາກົນ.

**ມາດຕາ 25 ການຫຼຸດຜ່ອນຊ່ອງວ່າງດິຈິຕອນ**

ການຫຼຸດຜ່ອນຊ່ອງວ່າງດິຈິຕອນ ແມ່ນການຫຼຸດຜ່ອນຄວາມແຕກໂຕນ ຫຼື ຄວາມບໍ່ເທົ່າທຽມໃນການເຂົ້າເຖິງ, ການນໍາໃຊ້ ແລະ ການໄດ້ຮັບປະໂຫຍດ ຈາກເຕັກໂນໂລຊີດິຈິຕອນ ລະຫວ່າງ ບຸກຄົນ, ຊຸມຊົນ ແລະ ເຂດພື້ນທີ່ຕ່າງໆ ໂດຍສະເພາະ ເຂດຕົວເມືອງ ກັບ ເຂດຊົນນະບົດ, ເຂດຫ່າງໄກສອກຫຼີກ ແລະ ທຸລະກັນດານ ເພື່ອໃຫ້ທຸກຄົນສາມາດນໍາໃຊ້ເຕັກໂນໂລຊີດິຈິຕອນໄດ້ຢ່າງເທົ່າທຽມ ແລະ ມີປະສິດທິຜົນ.

ລັດມີຄວາມຮັບຜິດຊອບໃນການຫຼຸດຜ່ອນຊ່ອງວ່າງດິຈິຕອນ ດັ່ງນີ້:

1. ຂະຫຍາຍພື້ນຖານໂຄງລ່າງໂທລະຄົມມະນາຄົມ ແລະ ເຄືອຂ່າຍອິນເຕີເນັດຄວາມໄວສູງ ໃຫ້ຄອບຄຸມທຸກພື້ນທີ່;
2. ສ້າງເງື່ອນໄຂໃຫ້ ປະຊາຊົນ, ຜູ້ດ້ອຍໂອກາດ ແລະ ຜູ້ມີລາຍຮັບຕໍ່າ ສາມາດເຂົ້າເຖິງອຸປະກອນ ແລະ ການບໍລິການດິຈິຕອນ ໃນລາຄາທີ່ສົມເຫດສົມຜົນ;
3. ສົ່ງເສີມການຄົ້ນຄວ້າ, ພັດທະນາ ແລະ ການນໍາໃຊ້ເຕັກໂນໂລຊີດິຈິຕອນທີ່ອໍານວຍຄວາມສະດວກໃຫ້ຄົນພິການ ແລະ ຜູ້ສູງອາຍຸ ໄດ້ເຂົ້າເຖິງ ແລະ ນໍາໃຊ້ເຕັກໂນໂລຊີດິຈິຕອນ ຢ່າງເທົ່າທຽມ.

**ມາດຕາ 26 ຄວາມຮັບຜິດຊອບຂອງລັດກ່ຽວກັບການຫັນເປັນສັງຄົມດິຈິຕອນ**

ລັດມີຄວາມຮັບຜິດຊອບ ກ່ຽວກັບການຫັນເປັນສັງຄົມດິຈິຕອນ ດັ່ງນີ້:

1. ຂະຫຍາຍໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ເຄືອຂ່າຍອິນເຕີເນັດຄວາມໄວສູງ ໃຫ້ກວມເອົາທຸກພື້ນທີ່ ໂດຍສະເພາະເຂດຊົນນະບົດ, ເຂດຫ່າງໄກສອກຫຼີກ ແລະ ທຸລະກັນດານ;
2. ສ້າງເງື່ອນໄຂໃຫ້ປະຊາຊົນ ທີ່ ດ້ອຍໂອກາດ, ພິການ, ມີລາຍຮັບຕໍ່າ ແລະ ແມ່ຍິງ ສາມາດເຂົ້າເຖິງອຸປະກອນ ແລະ ການບໍລິການດິຈິຕອນ ໃນລາຄາທີ່ເໝາະສົມ;
3. ພັດທະນາຫຼັກສູດດ້ານ ດິຈິຕອນ, ຄວາມປອດໄພທາງໄຊເບີ ແລະ ທັກສະການນໍາໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນລະບົບການສຶກສາທຸກລະດັບ;
4. ສົ່ງເສີມການຮຽນຮູ້ຜ່ານຊ່ອງທາງດິຈິຕອນໃຫ້ປະຊາຊົນ ໂດຍສະເພາະ ຜູ້ອອກແຮງງານ, ຄົນພິການ, ແມ່ຍິງ, ຜູ້ສູງອາຍຸ ແລະ ຜູ້ດ້ອຍໂອກາດ;
5. ພັດທະນາລະບົບການແພດທາງໄກ, ການເຂົ້າເຖິງຂໍ້ມູນຂ່າວສານການບໍລິການສາທາລະນະສຸກ, ຫັນປ່ຽນການຄຸ້ມຄອງປະຫວັດການປິ່ນປົວສຸຂະພາບ ເປັນລະບົບດິຈິຕອນ;
6. ສົ່ງເສີມການສ້າງ, ຜະລິດ ແລະ ເຜີຍແຜ່ ເນື້ອຫາ, ຜະລິດຕະພັນທາງດ້ານວັດທະນະທໍາ ແລະ ທ່ອງທ່ຽວ ຜ່ານຖານລະບົບດິຈິຕອນ;
7. ຫັນປ່ຽນມໍລະດົກທາງດ້ານວັດທະນະທໍາ, ປະຫວັດສາດ, ທໍາມະຊາດ, ຮີດຄອງປະເພນີ ແລະ ສິລະປະວັນນະຄະດີຂອງຊາດ ໃຫ້ຢູ່ໃນຮູບແບບຂໍ້ມູນດິຈິຕອນ ເພື່ອການອະນຸລັກ ແລະ ສຶກສາຮຽນຮູ້ຢ່າງຍືນຍົງ;
8. ມີຄວາມຮັບຜິດຊອບອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 27 ຈັນຍາທໍາໃນສັງຄົມດິຈິຕອນ**

ຈັນຍາທໍາໃນສັງຄົມດິຈິຕອນ ແມ່ນ ການປະພຶດ ຫຼື ສິ່ງທີ່ຄວນປະຕິບັດໃນສັງຄົມດິຈິຕອນ ຢ່າງ ມີຄຸນນະທໍາ, ມີຄວາມຮັບຜິດຊອບ ແລະ ຖືກຕ້ອງ.

ຜູ້ທີ່ເຄື່ອນໄຫວໃນສັງຄົມດິຈິຕອນ ຕ້ອງປະຕິບັດ ດັ່ງນີ້:

1. ເຄົາລົບສິດ ແລະ ກຽດສັກສີຂອງຜູ້ອື່ນ, ບໍ່ນໍາໃຊ້ສື່ສັງຄົມອອນລາຍ ເປັນເຄື່ອງມືໃນການຈໍາແນກ, ບິດເບືອນ, ໝິ່ນປະໝາດ, ໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

2. ມີຄວາມຮັບຜິດຊອບຕໍ່ຂໍ້ມູນຂ່າວສານຂອງຕົນ, ບໍ່ເປີດເຜີຍ, ເຜີຍແຜ່ ຫຼື ແບ່ງປັນ ຂໍ້ມູນສ່ວນບຸກຄົນ ຫຼື ຄວາມລັບຂອງຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;

3. ບໍ່ນໍາໃຊ້ ຜົນງານ, ຂໍ້ມູນ, ຮູບພາບ, ພາບເຄື່ອນໄຫວ ຫຼື ໃນຮູບແບບອື່ນ ທີ່ເປັນການລະເມີດຊັບສິນທາງປັນຍາຂອງຜູ້ອື່ນ;

4. ສ້າງ, ພັດທະນາ ແລະ ໃຫ້ບໍລິການ ຜະລິດຕະພັນເຕັກໂນໂລຊີດິຈິຕອນ ຢ່າງມີຄວາມຮັບຜິດ ຊອບ, ປອດໄພ ແລະ ສ້າງສັນ;

5. ມີຄວາມຮັບຜິດຊອບອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ III
## ໂຄງລ່າງພື້ນຖານ, ມາດຕະຖານເຕັກນິກ, ຄວາມປອດໄພ ແລະ ການເຊື່ອມໂຍງ

### ມາດຕາ 28 ໂຄງລ່າງພື້ນຖານການຫັນເປັນດິຈິຕອນ

ໂຄງລ່າງພື້ນຖານການຫັນເປັນດິຈິຕອນ ແມ່ນໂຄງລ່າງພື້ນຖານເຕັກໂນໂລຊີດິຈິຕອນ ທີ່ນໍາໃຊ້ເຂົ້າໃນການຫັນເປັນລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ ເປັນຕົ້ນ ເຂດພັດທະນາເຕັກໂນໂລຊີຈິຕອນ, ລະບົບເຄືອຂ່າຍໂທລະຄົມມະນາຄົມ, ສູນຂໍ້ມູນດິຈິຕອນ, ລະບົບໂຄງລ່າງຄລາວ, ຖານລະບົບດິຈິຕອນ, ລະບົບການຢັ້ງຢືນຕົວຕົນທາງດິຈິຕອນ, ເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ, ປັນຍາປະດິດ ແລະ ເຕັກໂນໂລຊີໃໝ່.

ການສ້າງ, ການພັດທະນາ ແລະ ການບໍລິການ ໂຄງລ່າງພື້ນຖານການຫັນເປັນດິຈິຕອນ ໃຫ້ຮັບປະກັນລັກສະນະລວມສູນ, ລົງທຶນບໍ່ຊໍ້າຊ້ອນ, ສອດຄ່ອງກັບມາດຕະຖານເຕັກນິກ, ຮັບປະກັນຄວາມປອດໄພ, ມີຄວາມຍືນຍົງ, ສາມາດເຊື່ອມໂຍງ, ນໍາໃຊ້ຮ່ວມກັນຢ່າງມີປະສິດທິພາບ.

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງ, ພັດທະນາ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ບໍາລຸງຮັກສາ ໂຄງລ່າງພື້ນຖານການຫັນເປັນດິຈິຕອນ ໃຫ້ສອດຄ່ອງກັບຍຸດທະສາດ ແລະ ແຜນການຫັນເປັນດິຈິຕອນຂອງລັດຖະບານ ໃນແຕ່ລະໄລຍະ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ນໍາໃຊ້ໂຄງລ່າງພື້ນຖານດິຈິຕອນຂອງລັດ. ໃນກໍລະນີເລືອກນໍາໃຊ້ໂຄງລ່າງພື້ນຖານຂອງພາກເອກະຊົນພາຍໃນປະເທດ ຫຼື ບໍລິການຂອງຕ່າງປະເທດ ຕ້ອງຮັບປະກັນການເຂົ້າເຖິງຂໍ້ມູນ, ສອດຄ່ອງກັບມາດຕະຖານເຕັກນິກ, ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ບົນພື້ນຖານການອະນຸຍາດຂອງຂະແໜງການເຕັກໂນໂລຊີ ແລະ ການສື່ສານ.

ສໍາລັບການລົງທຶນ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການສ້າງ, ພັດທະນາ ແລະ ການບໍລິການໂຄງລ່າງພື້ນຖານການຫັນເປັນດິຈິຕອນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 29 ມາດຕະຖານເຕັກນິກຂອງການຫັນເປັນດິຈິຕອນ

ມາດຕະຖານເຕັກນິກຂອງການຫັນເປັນດິຈິຕອນ ແມ່ນ ຂໍ້ກໍານົດທາງດ້ານເຕັກນິກ ທີ່ກໍານົດເພື່ອເປັນຫຼັກການ ແລະ ບ່ອນອີງໃນການອອກແບບ, ສ້າງ,ພັດທະນາ, ຕິດຕັ້ງ, ບໍລິຫານ, ເຊື່ອມຕໍ່, ຄວາມປອດໄພ ແລະ ບໍາລຸງຮັກສາລະບົບເຕັກນິກຂອງການຫັນເປັນດິຈິຕອນ.

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການ ຄົ້ນຄວ້າ, ສ້າງ ແລະ ປັບປຸງ ມາດຕະຖານເຕັກນິກຂອງການຫັນເປັນດິຈິຕອນ ໃນແຕ່ລະໄລຍະ ເພື່ອສະ ເ ໜີລັດຖະບານພິຈາລະນາປະກາດໃຊ້.

**ມາດຕາ 30 ຄວາມປອດໄພ ຂອງການຫັນເປັນດິຈິຕອນ**

ຄວາມປອດໄພຂອງການຫັນເປັນດິຈິຕອນ ແມ່ນ ມາດຕະການ, ວິທີການ ແລະ ລະບົບຮັກສາຄວາມປອດໄພ ຂອງລະບົບເຕັກໂນໂລຊີດິຈິຕອນ ເພື່ອສະກັດກັ້ນການ ເຂົ້າເຖິງລະບົບ, ປອມແປງ, ແກ້ໄຂ, ລຶບ ຫຼື ໂອນຍ້າຍ ຂໍ້ມູນ ຫຼື ປິດ ການເຮັດວຽກ ຂອງ ລະບົບເຕັກໂນໂລຊີດິຈິຕອນ ໂດຍບໍ່ໄດ້ຮັບອະນຸຍາດ.

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ສ້າງ ແລະ ປັບປຸງ ມາດຕະຖານຄວາມປອດໄພຂອງການຫັນເປັນດິຈິຕອນ ເພື່ອສະເໜີລັດຖະບານພິຈາລະນາປະກາດໃຊ້ ໃນແຕ່ລະໄລຍະ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງປະຕິບັດຕາມມາດຕະຖານຄວາມປອດໄພຂອງການຫັນເປັນດິຈິຕອນ ທີ່ລັດຖະບານກຳນົດ ເປັນຕົ້ນ ການນຳໃຊ້ລະບົບຢັ້ງຢືນຕົວຕົນ, ການເຂົ້າລະຫັດຂໍ້ມູນ, ການກຳນົດສິດໃນການເຂົ້າລະບົບ, ມາດຕະການປົກປ້ອງຂໍ້ມູນສ່ວນບຸກຄົນ.

**ມາດຕາ 31 ການເຊື່ອມໂຍງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ຕ້ອງສ້າງກົນໄກ ແລະ ວິທີການໃນການເຊື່ອມໂຍງ ແລະ ແລກປ່ຽນຂໍ້ມູນດິຈິຕອນລະຫວ່າງກັນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຫັນເປັນດິຈິຕອນ.

## ພາກທີ IV
## ການພັດທະນາຊັບພະຍາກອນມະນຸດ

**ມາດຕາ 32 ການພັດທະນາຊັບພະຍາກອນມະນຸດທາງດ້ານດິຈິຕອນ**

ການພັດທະນາຊັບພະຍາກອນມະນຸດທາງດ້ານດິຈິຕອນ ແມ່ນ ການສ້າງ ແລະ ຍົກລະດັບ ຄວາມຮູ້, ຄວາມສາມາດ, ທັກສະ, ຈັນຍາທຳ ແລະ ຈັນຍາບັນ ທາງດ້ານເຕັກໂນໂລຊີດິຈິຕອນ ໃຫ້ແກ່ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ ແລະ ປະຊາຊົນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການຫັນເປັນດິຈິຕອນ.

ລັດ ເປີດກວ້າງໃຫ້ມີການຮ່ວມມືລະຫວ່າງ ພາກທຸລະກິດ, ອົງການຈັດຕັ້ງ ແລະ ຜູ້ຊ່ຽວຊານ ທັງພາຍໃນ ແລະ ຕ່າງປະເທດ ມີສ່ວນຮ່ວມໃນການສ້າງສະພາບແວດລ້ອມດິຈິຕອນ, ສ້າງຫ້ອງທົດລອງ, ຮັບນັກສຶກສາເຂົ້າຝຶກງານ ແລະ ໃຫ້ທຶນການສຶກສາ ເພື່ອຮັບປະກັນການພັດທະນາຊັບພະຍາກອນມະນຸດທາງດ້ານດິຈິຕອນ ຢ່າງມີຄຸນນະພາບ ແລະ ຍືນຍົງ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ຕ້ອງຈັດຝຶກອົບຮົມ ແລະ ຍົກລະດັບຄວາມຮູ້-ທັກສະດ້ານດິຈິຕອນ ໃຫ້ແກ່ພະນັກງານຂອງຕົນຢ່າງເປັນປົກກະຕິ.

ຫົວໜ່ວຍທຸລະກິດ ຕ້ອງມີນະໂຍບາຍ ແລະ ຄຳແນະນຳການຫັນປ່ຽນອາຊີບ ໃຫ້ແກ່ພະນັກງານຂອງຕົນທີ່ມີຄວາມສ່ຽງຕໍ່ການສູນເສຍອາຊີບ ຈາກຜົນກະທົບຂອງການຫັນເປັນດິຈິຕອນ.

ກະຊວງເຕັກໂນໂລຊີ ແລະ ການສື່ສານ ປະສານສົມທົບກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ສ້າງມາດຕະຖານສີມືແຮງງານດ້ານດິຈິຕອນ, ຈັດການແຂ່ງຂັນດ້ານດິຈິຕອນ, ລະບົບການທົດສອບຄວາມຮູ້ດ້ານດິຈິຕອນ ແລະ ອອກໃບຢັ້ງຢືນວິຊາຊີບ ເພື່ອຮອງຮັບການຈ້າງງານ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 33 ການສ້າງ ແລະ ພັດທະນາຫຼັກສູດດ້ານດິຈິຕອນ**

ການສ້າງ ແລະ ພັດທະນາຫຼັກສູດດ້ານດິຈິຕອນ ແມ່ນ ການຄົ້ນຄວ້າ, ສ້າງ ແລະ ບັນຈຸເນື້ອໃນວິຊາການດ້ານເຕັກໂນໂລຊີດິຈິຕອນ ເຂົ້າໃນລະບົບການສຶກສາ ແລະ ພັດທະນາຫຼັກສູດດັ່ງກ່າວ ເພື່ອສ້າງພື້ນຖານແນວຄວາມຄິດ, ຄວາມຮູ້, ທັກສະ ແລະ ຄວາມສາມາດໃນການນຳໃຊ້ເຕັກໂນໂລຊີດິຈິຕອນ ໃຫ້ແກ່ພົນລະເມືອງ.

ລັດ ເປີດກວ້າງໃຫ້ມີການຮ່ວມມືລະຫວ່າງ ພາກທຸລະກິດ, ອົງການຈັດຕັ້ງ ແລະ ຜູ້ຊ່ຽວຊານ ທັງພາຍໃນ ແລະ ຕ່າງປະເທດ ມີສ່ວນຮ່ວມໃນການສ້າງ ແລະ ພັດທະນາຫຼັກສູດ ເພື່ອຮັບປະກັນໃຫ້ຫຼັກສູດມີຄວາມສອດຄ່ອງກັບສະພາບການພັດທະນາເຕັກໂນໂລຊີ ໃນແຕ່ລະໄລຍະ.

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການປະສານສົມທົບກັບ ກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນທີ່ກ່ຽວຂ້ອງ ສ້າງ ແລະ ປັບປຸງຫຼັກສູດດິຈິຕອນ.

**ມາດຕາ 34 ການນຳໃຊ້ຜູ້ຊ່ຽວຊານເຂົ້າໃນການພັດທະນາຊັບພະຍາກອນມະນຸດ**

ອົງການຈັດຕັ້ງລັດ ສາມາດນຳໃຊ້ຜູ້ຊ່ຽວຊານ ດ້ານເຕັກໂນໂລຊີດິຈິຕອນກ່ຽວກັບຂົງເຂດຕົນ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດຂອງບຸກຄະລາກອນທີ່ກ່ຽວຂ້ອງ ໃຫ້ມີທັກສະການນຳໃຊ້ດິຈິຕອນ ເຂົ້າໃນການຄຸ້ມຄອງ, ບໍລິຫານ ແລະ ພັດທະນາວຽກງານຂອງຕົນ ເພື່ອຂັບເຄື່ອນການຫັນເປັນດິຈິຕອນ ຢ່າງມີປະສິດທິຜົນ ແລະ ຍືນຍົງ.

## ພາກທີ V
## ການລົງທຶນໃນວຽກງານການຫັນເປັນດິຈິຕອນ

**ມາດຕາ 35 ການລົງທຶນ**

ລັດຈັດສັນງົບປະມານ ລົງທຶນເຂົ້າໃນວຽກງານການຫັນເປັນດິຈິຕອນ ຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດລົງທຶນເຂົ້າໃນວຽກງານຫັນເປັນດິຈິຕອນ ໂດຍໄດ້ຮັບນະໂຍບາຍ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 36 ເປົ້າໝາຍການລົງທຶນ**

ການລົງທຶນໃນວຽກງານການຫັນເປັນດິຈິຕອນ ມີເປົ້າໝາຍ ດັ່ງນີ້:

1. ການສ້າງ, ພັດທະນາ ແລະ ບຳລຸງຮັກສາ ລະບົບດິຈິຕອນ ແລະ ໂຄງລ່າງພື້ນຖານເຕັກໂນໂລຊີດິຈິຕອນ;
2. ການພັດທະນາຊັບພະຍາກອນມະນຸດ ດ້ານເຕັກໂນໂລຊີດິຈິຕອນ;
3. ການສ້າງຄວາມປອດໄພທາງໄຊເບີ;
4. ການເຄື່ອນໄຫວວຽກງານລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ;
5. ວຽກງານອື່ນກ່ຽວກັບການຫັນເປັນດິຈິຕອນ.

## ພາກທີ VI
## ການປະເມີນວຽກງານຫັນເປັນດິຈິຕອນ

**ມາດຕາ 37 ການເກັບກຳຂໍ້ມູນ ແລະ ການປະເມີນ ວຽກງານຫັນເປັນດີຈີຕອນ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງເກັບກຳຂໍ້ມູນ ແລະ ປະເມີນການຈັດຕັ້ງປະຕິບັດວຽກງານຫັນເປັນດີຈີຕອນຂອງຕົນ ເປັນປະຈຳທຸກປີ.

ກະຊວງເຕັກໂນໂລຊີ ແລະ ການສື່ສານ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ, ສ້າງ ແລະ ພັດທະນາ ເຄື່ອງມື, ແບບພິມ ຮັບໃຊ້ການເກັບກຳຂໍ້ມູນ ແລະ ການປະເມີນວຽກງານຫັນເປັນດີຈີຕອນ.

**ມາດຕາ 38 ການລາຍງານການປະເມີນ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງສະຫຼຸບ ແລະ ລາຍງານການປະເມີນ ການຫັນເປັນດີຈີຕອນຂອງຕົນ ປະຈຳປີ ຕໍ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ ຕາມແບບພິມ ເພື່ອສັງລວມ ແລະ ລາຍງານຕໍ່ລັດຖະບານ ໂດຍຜ່ານຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈີຕອນ ຂອງ ສປປ ລາວ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 39 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ວຽກງານຫັນເປັນດີຈີຕອນ ເພື່ອສ້າງຄວາມແຕກແຍກ ຫຼື ເຄື່ອນໄຫວທີ່ແຕະຕ້ອງເຖິງ ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
2. ແຊກແຊງ, ທຳລາຍ, ຍຶດຄອງ, ເຂົ້າເຖິງ ຫຼື ດັດແປງ ລະບົບດີຈີຕອນ, ຖານຂໍ້ມູນ ແລະ ໂຄງລ່າງພື້ນຖານຂອງການຫັນເປັນດີຈີຕອນ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຂັດຂວາງ, ສ້າງອຸປະສັກ, ໂຄສະນາ ຫຼື ໃສ່ຮ້າຍປ້າຍສີ ຕໍ່ການເຄື່ອນໄຫວວຽກງານຫັນເປັນດີຈີຕອນ;
4. ສ້າງ, ສົ່ງຕໍ່ ຫຼື ເຜີຍແຜ່ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຫັນເປັນດີຈີຕອນ ທີ່ ບິດເບືອນ, ບໍ່ມີມູນຄວາມຈິງ;
5. ເກັບກຳ, ນຳໃຊ້, ຊື້ ຂາຍ, ແລກປ່ຽນ, ແບ່ງປັນ, ເປີດເຜີຍ ຂໍ້ມູນ ກ່ຽວກັບວຽກງານຫັນເປັນດີຈີຕອນ ໂດຍບໍ່ໄດ້ຮັບອະນຸຍາດ;
6. ຮ່ວມມື, ສ້າງເງື່ອນໄຂ ຫຼື ອຳນວຍຄວາມສະດວກ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ສ້າງຄວາມເສຍຫາຍຕໍ່ການເຄື່ອນໄຫວວຽກງານຫັນເປັນດີຈີຕອນ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 40 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງມີ ພຶດຕິກຳ ດັ່ງນີ້:

1. ເຂົ້າເຖິງ, ເປີດເຜີຍ ຫຼື ເຜີຍແຜ່ ຂໍ້ມູນ ທີ່ເປັນຄວາມລັບ ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຫັນເປັນດີຈີຕອນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ກົດໜ່ວງ ຖ່ວງດຶງ, ທຳລາຍ ແລະ ປອມແປງ ເອກະສານ ກ່ຽວກັບວຽກງານຫັນເປັນດີຈີຕອນ;

3. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດ ສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກຂອງຕົນ;

4. ປະລະ ຫຼື ເມີນເສີຍ ຕໍ່ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບກ່ຽວກັບວຽກງານຫັນເປັນດິຈິຕອນ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VIII
## ການຄຸ້ມຄອງ ແລະ ກວດກາ ວຽກງານການຫັນເປັນດິຈິຕອນ

### ມາດຕາ 41 ອົງການຄຸ້ມຄອງ ແລະ ກວດກາ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນເສນາທິການ ແລະ ຫ້ອງການປະຈຳການ ໃຫ້ແກ່ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນຂອງ ສປປ ລາວ ໃນການຄຸ້ມຄອງ, ຕິດຕາມ ກວດກາວຽກງານຫັນເປັນດິຈິຕອນ ຢ່າງລວມສູນ ແລະ ເປັນໃຈກາງປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

### ມາດຕາ 42 ສິດ ແລະ ໜ້າທີ່ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ

ໃນການຄຸ້ມຄອງວຽກງານຫັນເປັນດິຈິຕອນ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານຫັນເປັນດິຈິຕອນ ເພື່ອສະເໜີລັດຖະບານ ພິຈາລະນາ ໂດຍຜ່ານຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນຂອງ ສປປ ລາວ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານຫັນເປັນດິຈິຕອນ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບການຫັນເປັນດິຈິຕອນ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມ ຢ່າງກວ້າງຂວາງ;

4. ຄົ້ນຄວ້າ ກຳນົດມາດຕະຖານເຕັກນິກ, ຮັບຮອງ, ເລືອກເຟັ້ນ ເຕັກໂນໂລຊີດິຈິຕອນ ແລະ ວັດຖຸປະກອນ ທີ່ຮັບປະກັນຄວາມປອດໄພ;

5. ຊຸກຍູ້, ສົ່ງເສີມ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຫັນເປັນດິຈິຕອນ ໃນຂອບເຂດທົ່ວປະເທດ;

6. ຝຶກອົບຮົມ, ຍົກລະດັບ ຄວາມຮູ້ ຄວາມສາມາດດ້ານເຕັກໂນໂລຊີດິຈິຕອນ ໃຫ້ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ;

7. ເກັບກຳ ແລະ ສັງລວມຂໍ້ມູນ ກ່ຽວກັບວຽກງານຫັນເປັນດິຈິຕອນ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ;

8. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຫັນເປັນດິຈິຕອນ;

9. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຫັນເປັນດິຈິຕອນ;

10. ພົວພັນຮ່ວມມື ກັບຕ່າງປະເທດ ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຫັນເປັນດິຈິຕອນ;

11. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຫັນເປັນດິຈິຕອນ ຕໍ່ລັດຖະບານ ໂດຍຜ່ານຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນຂອງ ສປປ ລາວ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

**ມາດຕາ 43 ສິດ ແລະ ໜ້າທີ່ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງວຽກງານຫັນເປັນດີຈິຕອນ ພະແນກເຕັກໂນໂລຊີ ການສື່ສານ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານຫັນເປັນດີຈິຕອນ;
2. ໂຄສະນາ ເຜີຍແຜ່ ນະໂນບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບການຫັນເປັນດີຈິຕອນ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມ ຢ່າງກວ້າງຂວາງ;
3. ຊຸກຍູ້, ສົ່ງເສີມ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຫັນເປັນດີຈິຕອນ;
4. ສະເໜີສ້າງ, ບຳລຸງ ແລະ ຍົກລະດັບບຸກຄະລາກອນ ດ້ານເຕັກໂນໂລຊີດີຈິຕອນ ເພື່ອນຳໃຊ້ເຂົ້າໃນວຽກງານຫັນເປັນດີຈິຕອນ ລວມທັງ ຈັດຝຶກອົບຮົມ, ສຳມະນາ ໃຫ້ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ;
5. ເກັບກຳ ແລະ ສັງລວມຂໍ້ມູນ ກ່ຽວກັບວຽກງານຫັນເປັນດີຈິຕອນ ຢູ່ພາຍໃນນະຄອນຫຼວງ, ແຂວງຕົນ;
6. ປະສານສົມທົບກັບພະແນກ, ອົງການລັດທຽບເທົ່າພະແນກ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຫັນເປັນດີຈິຕອນ;
7. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຫັນເປັນດີຈິຕອນ;
8. ພົວພັນຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານຫັນເປັນດີຈິຕອນ ຕາມການມອບໝາຍ;
9. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຫັນເປັນດີຈິຕອນ ຕໍ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ໂດຍຜ່ານຄະນະກຳມະການ ເພື່ອການຫັນເປັນດີຈິຕອນ ຂັ້ນແຂວງ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 44 ສິດ ແລະ ໜ້າທີ່ຂອງ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຫັນເປັນດີຈິຕອນ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ໃນການຈັດຕັ້ງປະຕິບັດວຽກງານຫັນເປັນດີຈິຕອນ, ໃຫ້ການຮ່ວມມື ແລະ ປະສານສົມທົບກັບ ອົງການຄຸ້ມຄອງ ແລະ ກວດກາວຽກງານຫັນເປັນດີຈິຕອນ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 45 ເນື້ອໃນການກວດກາ**

ການກວດກາ ວຽກງານການຫັນເປັນດີຈິຕອນ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານຫັນເປັນດີຈິຕອນ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຫັນເປັນດີຈິຕອນ;
3. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 46 ຮູບການການກວດກາ**

ການກວດກາ ວຽກງານຫັນເປັນດີຈິຕອນ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ແລະ ມີການກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໃນເວລາມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານທັນເປັນດີຈີຕອນ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 47 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 48 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ X
## ບົດບັນຍັດສຸດທ້າຍ

### ມາດຕາ 49 ການຈັດຕັ້ງປະຕິບັດ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 50 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ............................. ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປລາວ**
**ນາຍົກລັດຖະມົນຕີ**